ຜ-ຟຟລ ຮ່ວມປຶກສາຫາລືກັບ ສະພາປະຊາຊົນແຂວງຫຼວງພະບາງ ກ່ຽວກັບ ການບໍລິຫານນ້ຳ ແລະ ສິ່ງແວດລ້ອມ ຂອງໂຄງການໄຟຟ້ານ້ຳຄານ 2-3

EDL-GEN









ວັນທີ 18 ພຶດສະພາ 2026, EDL-Generation Public Company ຫຼື ຜ-ຟຟລ ໄດ້ນຳຄະນະຜູ້ແທນຂອງບໍລິສັດ ເຂົ້າຮ່ວມການປຶກສາຫາລື ແລະ ສ້າງຄວາມເຂົ້າໃຈຮ່ວມກັນ ກັບ ສະພາປະຊາຊົນແຂວງຫຼວງພະບາງ, ພະແນກ ອຸດສາຫະກຳ ແລະ ການຄ້າແຂວງຫຼວງພະບາງ ພ້ອມດ້ວຍບັນດາ ຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບການບໍລິຫານຈັດການນ້ຳ, ສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການໄຟຟ້ານ້ຳຄານ 2-3.

ຕາງໜ້າທັງສອງຝ່າຍ ເຂົ້າຮ່ວມກອງປະຊຸມຄັ້ງນີ້ ນຳໂດຍ ທ່ານ ສຳນານ ສົນທະນີ, ຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານ ສະພາປະຊາຊົນແຂວງ ຫຼວງພະບາງ, ພ້ອມດ້ວຍຄະນະ ແລະ ຕາງໜ້າ ຜ-ຟຟລ ນຳໂດຍ ທ່ານ ສີລິພົມ ແສງອ່ອນແກ້ວ, ຮອງຜູ້ອຳນວຍການໃຫຍ່ ສາຍງານຜະລິດ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ພ້ອມດ້ວຍຄະນະບໍລິຫານ ຈາກກົມພະລັງງານ ແລະ ກົມຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ພ້ອມດ້ວຍທີມງານ

ກອງປະຊຸມໃນຄັ້ງນີ້ ມີຈຸດປະສົງເພື່ອສ້າງຄວາມເຂົ້າໃຈຮ່ວມກັນ ກ່ຽວກັບວຽກງານບໍລິຫານ ຈັດການນ້ຳ ຂອງເຂື່ອນໄຟຟ້ານ້ຳຄານ 2-3 ພ້ອມທັງ ແລກປ່ຽນຂໍ້ມູນ ແລະ ສ້າງຄວາມເຂົ້າໃຈຢ່າງຮອບດ້ານ ກ່ຽວກັບມາດຕະການບໍລິຫານເຂື່ອນ, ການຄວບຄຸມນ້ຳໃນລະດູຝົນ, ລະບົບເຕືອນໄພ, ການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ການປະສານງານກັບພາກສ່ວນທ້ອງຖິ່ນ ເພື່ອໃຫ້ການດຳເນີນໂຄງການມີຄວາມປອດໄພ, ໂປ່ງໃສ ແລະ ສອດຄ່ອງກັບການພັດທະນາຢ່າງຍືນຍົງ.

ໃນໂອກາດນີ້, ຜ-ຟຟລ ໄດ້ນຳສະເໜີຂໍ້ມູນດ້ານວິຊາການ, ລະບົບການຕິດຕາມສະພາບນ້ຳ, ການນຳໃຊ້ເທັກໂນໂລຊີ Smart Monitoring ເຂົ້າມາຊ່ວຍໃນການຄາດຄະເນ ແລະ ການບໍລິຫານຈັດການນ້ຳ ເພື່ອຍົກລະດັບປະສິດທິພາບ ແລະ ຄວາມປອດໄພໃນການດຳເນີນໂຄງການ.

ພາຍຫຼັງສຳເລັດກອງປະຊຸມ, ຕາງໜ້າຈາກທັງສອງຝ່າຍ ໄດ້ຮ່ວມກັນລົງສະໜາມເພື່ອກວດກາພື້ນທີ່ຕົວຈິງ ຢູ່ເຂດ ບ້ານສາມັກຄີໄຊ, ບ້ານປາກແວດ ແລະ ບ້ານດອນໂມ ເມືອງ ຊຽງເງິນ, ແຂວງ ຫຼວງພະບາງ ເພື່ອຕິດຕາມ ແລະ ປຶກສາຫາລື ຊອກວິທີແກ້ໄຂບັນຫາທີ່ເຄີຍເກີດຂຶ້ນຮ່ວມກັນ ເພື່ອເຮັດໃຫ້ຊຸມຊົນທີ່ອາໄສຢູ່ເຂດລຸ່ມເຂື່ອນໄຟຟ້ານ້ຳຄານ 3 ມີການດຳລົງຊີວິດທີ່ດີ ແລະ ມີການພັດທະນາແບບຍືນຍົງ.

ການລົງພື້ນທີ່ໃນຄັ້ງນີ້ ສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງ ຜ-ຟຟລ ໃນການເຮັດວຽກຮ່ວມກັບພາກລັດ ແລະ ທ້ອງຖິ່ນ ຢ່າງໃກ້ຊິດ ເພື່ອຮ່ວມກັນ ຊອກຫາແນວທາງພັດທະນາ ແລະ ບໍລິຫານພະລັງງານໄຟຟ້າ ໃຫ້ມີຄວາມທັນສະໄໝ, ປອດໄພ ແລະ ຍືນຍົງ ຄວບຄູ່ກັບການຮັກສາສິ່ງແວດລ້ອມ ແລະ ຜົນປະໂຫຍດຂອງປະຊາຊົນ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ທາງເລືອກທີ່ຍືນຍົງສຳລັບທ່ານ, ພະລັງງານທີ່ຍືນຍົງສຳລັບຊາດ